ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----------------------

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ອົງການປະການສົງຄ.

2951

ເລກທີ 2 3 NOV /ຮສສ

ນະຄອນຫລວງວຽງຈັນ, ວັນທີ....../....../2011

| | |
|---|---|
| ຂາ | ເລກທີ 0444....... |
| ເຂົ້າ | ວັນທີ ..15/12/2011. |

# ແຈ້ງການແນະນຳ

## ກ່ຽວກັບການປັບປຸງຄ່າແຮງງານຂັ້ນຕ່ຳສຸດ ຂອງຜູ້ອອກແຮງງານ ທີ່ເຮັດວຽກໃນຂົງເຂດທຸລະກິດ

- ອີງຕາມແຈ້ງການຂອງຫ້ອງວ່າການລັດຖະບານ ສະບັບເລກທີ 712/ ຫລບ, ລົງວັນທີ່ 31 / 10 / 2011 ເລື່ອງ: ການປັບປຸງຄ່າແຮງງານຂັ້ນຕ່ຳສຸດ ຂອງຜູ້ອອກແຮງງານ ທີ່ເຮັດວຽກໃນຂົງເຂດທຸລະກິດ.
- ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດແຈ້ງການຂອງຫ້ອງວ່າການລັດຖະບານ ສະບັບດັ່ງກ່າວ ມີຄວາມສະດວກ, ຊັດເຈນ ແລະ ມີປະສິດທິພາບສູງ.

### ລັດຖະມົນຕີວ່າການ

### ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ອອກແຈ້ງການແນະນຳດັ່ງນີ້:

I. ຈຸດປະສົງ

1.1. ແນໃສ່ ເຮັດໃຫ້ ຜູ້ໃຊ້ແຮງງານ ໃນຂົງເຂດການຜະລິດ,ທຸລະກິດ ແລະ ການບໍລິການ ຂອງທຸກພາກສ່ວນເສດຖະກິດ ຈົ່ງຮັບຮູ້ ແລະ ເຂົ້າໃຈລະອຽດຖີ່ມ ຕໍ່ເນື້ອໃນ ແລະ ຈຸດປະສົງ ອັນແທ້ຈິງຂອງການປັບປຸງຄ່າແຮງງານຂັ້ນຕ່ຳສຸດ ຂອງຜູ້ອອກແຮງງານ ທີ່ເຮັດວຽກໃນຂົງເຂດທຸລະກິດ, ເພື່ອຈັດຕັ້ງປະຕິບັດໃຫ້ເປັນເອກະພາບ ແລະ ຖືກຕ້ອງ.

1.2. ແນໃສ່ເຮັດໃຫ້ຜູ້ອອກແຮງງານໄດ້ຮັບສິດ, ຜົນປະໂຫຍດ ແລະ ຄວາມເປັນທຳ ໃນການ

ກຳນົດຄ່າແຮງງານ ຂອງຫົວໜ່ວຍແຮງງານຕ່າງໆ, ຮູ້ລືມທຽບຕົວເອງ ກັບວຽກທີ່ເຮັດ ແລະ ກັບລາຍໄດ້ທີ່ຕົນຄວນຈະໄດ້ຮັບຈາກການເຮັດວຽກ.

1.3. ເພື່ອແນໃສ່ປັບປຸງການດຳລົງຊີວິດຂັ້ນພື້ນຖານ ຂອງຜູ້ອອກແຮງງານ ໃຫ້ດີຂຶ້ນ,ສອດຄ່ອງກັບ ລະດັບການຂະຫຍາຍຕົວດ້ານເສດຖະກິດ-ສັງຄົມ,ສອດຄ່ອງກັບ ຄວາມຮຽກຮ້ອງຕ້ອງການ ທາງດ້ານວັດຖຸ ແລະ ຈິດໃຈ ແລະ ຜົນປະໂຫຍດທາງດ້ານ ສະຫວັດດີການສັງຄົມ, ສອດຄ່ອງລະດັບຄ່າຄອງຊີບຕ່າງໆ, ເພື່ອເປັນການກະຕຸກຊຸກຍູ້ໃຫ້ຜູ້ອອກແຮງງານສາມາດເຮັດວຽກຢ່າງໝັ້ນຄົງ ແລະ ມີປະສິດຕິພາບ.

## II. ຄຳນິຍາມຄ່າແຮງງານຂັ້ນຕ່ຳສຸດ

ຄ່າແຮງງານຂັ້ນຕ່ຳສຸດ ທີ່ກຳນົດໄວ້ໃນແຈ້ງການແນະນຳສະບັບນີ້ ແມ່ນໝາຍເຖິງລະດັບຄ່າແຮງງານຂັ້ນຕ່ຳສຸດ ທີ່ຜູ້ໃຊ້ແຮງງານ ຕ້ອງເບີກຈ່າຍໃຫ້ຜູ້ອອກແຮງງານ ທີ່ບໍ່ມີສີມືແຮງງານ, ບໍ່ທັນມີຄວາມຊຳນານງານ, ຕາມກຳນົດເວລາເຮັດວຽກປົກກະຕິ 26 ວັນຕໍ່ເດືອນ, 6 ວັນ ຕໍ່ອາທິດ ແລະ 8 ຊົ່ວໂມງຕໍ່ມື້ ໂດຍບໍ່ທັນໄດ້ລວມເອົາເງິນຄ່າຜະລິດ,ເງິນເຮັດວຽກເພີ່ມໂມງ, ເງິນບຳເນັດ, ເງິນຊຸກຍູ້ມາເຮັດວຽກ,ເງິນຄ່າອາຫານ ແລະ ເງິນນະໂຍບາຍອື່ນໆເຂົ້ານຳ.

## III. ເປົ້າໝາຍ ແລະ ຂອບເຂດການນຳໃຊ້

3.1. ຄ່າແຮງງານ ຂັ້ນຕ່ຳສຸດນີ້ ມີເປົ້າໝາຍນຳໃຊ້ສຳລັບ ຜູ້ອອກແຮງງານທຸກຄົນ ທີ່ບໍ່ມີສີມື ແລະ ບໍ່ທັນມີຄວາມຊຳນານງານ ທີ່ເຮັດວຽກໃນຂົງເຂດ ການຜະລິດ,ທຸລະກິດ ແລະ ການບໍລິການ ຂອງທຸກພາກສ່ວນເສດຖະກິດ ທີ່ເຄື່ອນໄຫວ ຢູ່ໃນ ສປປ ລາວ.

3.2. ຄ່າແຮງງານ ຂັ້ນຕ່ຳສຸດ ທີ່ກຳນົດໄວ້ໃນແຈ້ງການແນະນຳສະບັບ ບໍ່ມີຜົນນຳໃຊ້ ຕໍ່ຜູ້ອອກແຮງງານລາວ ທີ່ເຮັດວຽກໃນອົງການຕ່າງປະເທດ ປະຈຳ ສປປ ລາວ, ຕໍ່ລັດຖະກອນ ແລະ ພະນັກງານສັນຍາຈ້າງ ທີ່ເຮັດວຽກໃນຂະແໜງຄຸ້ມຄອງບໍລິຫານ, ວິຊາການຂອງລັດ, ອົງການຂອງພັກ,ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ຂົງເຂດປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ທີ່ໄດ້ຮັບເງິນເດືອນ ຈາກຄັງເງິນເດືອນຂອງງົບປະມານແຫ່ງຊາດເຊິ່ງມີລະບຽບການສະເພາະຕ່າງຫາກ.

IV. ເນື້ອໃນ ແລະ ຫຼັກການກຳນົດ ຄ່າແຮງງານຂັ້ນຕ່ຳສຸດ

4.1. ຄ່າແຮງງານຂັ້ນຕ່ຳສຸດ ຂອງຜູ້ອອກແຮງງານ ທີ່ເຮັດວຽກໃນຂົງເຂດການຜະລິດ, ທຸລະກິດ ແລະ ການບໍລິການ ໃນຂອບເຂດທົ່ວປະເທດ ແມ່ນເທົ່າກັບ 626.000 ກີບ (ຫົກແສນສອງໝື່ນຫົກພັນກີບຖ້ວນ) ຕໍ່ຄົນຕໍ່ເດືອນ, ຖ້າຄິດໄລ່ເປັນວັນ ແມ່ນບໍ່ໃຫ້ຕ່ຳກວ່າ 24.076 ກີບ (ສອງໝື່ນ ສີ່ພັນເຈັດສິບຫົກກີບຖ້ວນ) ຕໍ່ຄົນຕໍ່ວັນ, ຖ້າຄິດໄລ່ເປັນຊົ່ວໂມງ ແມ່ນບໍ່ໃຫ້ຕ່ຳກວ່າ 3.009 ກີບ( ສາມພັນເກົ້າກີບ) ຕໍ່ຄົນຕໍ່ຊົ່ວໂມງ.

4.2. ໃນກໍລະນີ ທີ່ຫົວໜ່ວຍການຜະລິດ, ທຸລະກິດ ແລະ ການບໍລິການໃດໜຶ່ງ ເບີກຈ່າຍຄ່າແຮງງານໃຫ້ຜູ້ອອກແຮງງານ ຕາມການມອບເໝົາ,ຕາມວັນ ຫລື ຕາມຊົ່ວໂມງເຮັດວຽກ, ຕາມຫົວໜ່ວຍຜະລິດຕະພັນ ແລະ ໃນໄລຍະທົດລອງ ຫລື ຝຶກງານນັ້ນ ຕ້ອງກຳນົດເອົາ ຄ່າແຮງງານຂັ້ນຕ່ຳສຸດດັ່ງກ່າວຂ້າງເທິງນັ້ນ ເປັນມາດຖານໃນການກຳນົດຄ່າແຮງງານຂັ້ນຕ່ຳສຸດ ໃຫ້ຜູ້ອອກແຮງງານ, ເຊິ່ງຕ່ຳສຸດບໍ່ໃຫ້ຕ່ຳກວ່າຄ່າແຮງງານຂັ້ນຕ່ຳສຸດເປັນວັນ, ເປັນຊົ່ວໂມງ ຫລື ຕາມຜະລິດຕະພັນ ທີ່ກຳນົດໄວ້ໃນ ຂໍ້ 4.1 ຂ້າງເທິງນີ້.

4.3. ຜູ້ໃຊ້ແຮງງານ ສາມາດກຳນົດ ລະດັບຄ່າແຮງງານ ໃຫ້ຜູ້ອອກແຮງງານຂັ້ນຕ່ຳສຸດ ສູງກວ່າລະດັບຄ່າແຮງງານຂັ້ນຕ່ຳສຸດ ທີ່ລັດຖະບານປະກາດໃຊ້ ໃຫ້ແກ່ຜູ້ອອກແຮງງານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໄດ້ ເພື່ອແນໃສ່ຮັບປະກັນການກະຕຸກຊຸກຍູ້ໃຫ້ຜູ້ອອກແຮງງານສາມາດເຮັດວຽກຢ່າງໝັ້ນຄົງ ແລະ ມີປະສິດຕິພາບ.

4.4. ຄ່າແຮງງານຂັ້ນຕ່ຳສຸດນີ້ ບໍ່ແມ່ນລາຍໄດ້ຕ່ຳສຸດ ແລະ ບໍ່ແມ່ນເງິນເດືອນພື້ນຖານ ຂອງຜູ້ອອກແຮງງານ, ເຊິ່ງຫ້າມບໍ່ໃຫ້ຜູ້ໃຊ້ແຮງງານຖືເອົາຄ່າແຮງງານຂັ້ນຕ່ຳສຸດນີ້ ກຳນົດເປັນເງິນເດືອນພື້ນຖານ ໃຫ້ແກ່ຜູ້ອອກແຮງງານ.

4.5. ໃນກໍລະນີຫົວໜ່ວຍແຮງງານໃດໜຶ່ງ ໄດ້ເບີກຈ່າຍຄ່າແຮງງານຂັ້ນຕ່ຳສຸດ ໃຫ້ຜູ້ອອກແຮງງານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃນໄລຍະຜ່ານມາ ເທົ່າກັບ ຫລື ສູງກວ່າ ລະດັບຄ່າແຮງງານຂັ້ນຕ່ຳສຸດນີ້ແລ້ວ ແມ່ນໃຫ້ສືບຕໍ່ປະຕິບັດຕາມປົກກະຕິ, ຖ້າຫົວໜ່ວຍແຮງງານໃດໜຶ່ງ ຫາກເບີກຈ່າຍຄ່າແຮງງານ ໃຫ້ຜູ້ອອກແຮງງານຂອງຕົນຕ່ຳກວ່າ ລະດັບຄ່າແຮງງານຂັ້ນຕ່ຳສຸດນີ້ ຕ້ອງແກ້ໄຂປັບປຸງລະດັບຄ່າແຮງງານນັ້ນໂດຍໄວ ເພື່ອໃຫ້ສອດຄ່ອງ ແລະ ຖືກຕ້ອງຕາມຄ່າແຮງງານຂັ້ນຕ່ຳສຸດ ທີ່ລັດຖະບານປະກາດໃຊ້.

4.6. ຖ້າວ່າຜູ້ໃຊ້ແຮງງານ ນຳໃຊ້ແຮງງານຂັ້ນຕ່ຳ ຫລື ແຮງງານ ທີ່ມີວິຊາສະເພາະໃຫ້ເຮັດວຽກຢູ່ໃນຂະແໜງການທີ່ໜັກໜ່ວງ ແລະ ສັບສົນກວ່າ, ວຽກທີ່ເປັນອັນຕະລາຍ ຕໍ່ສຸຂະພາບ ເຊັ່ນ: ເຮັດວຽກກັບທາດເບື່ອ, ທາດເຄມີ, ກຳມັນຕະພາບລັງສີ, ພະຍາດຕິດແປດ, ກິ່ນອາຍ

ຄ້ອນ ທີ່ເປັນ ອັນຕະລາຍຕໍ່ສຸຂະພາບ, ເຮັດວຽກ ຢູ່ຂຸມ ຫລື ອຸໂມງໃຕ້ດິນ, ຢູ່ພື້ນນ້ຳ, ຢູ່ເທິງອາກາດທີ່ມີຄວາມສູງ, ຢູ່ສະຖານທີ່ມີຄວາມຮ້ອນ ຫລື ເຢັນກ່ວາປົກກະຕິ, ເຮັດວຽກ ກັບເຄື່ອງມືສັ່ນສະເທືອນເປັນປະຈຳ, ຢູ່ເຂດທຸລະກັນດານ ຫ່າງໄກສອກຫລີກ, ບ່ອນທີ່ມີຄວາມສ່ຽງ ແລະ ບ່ອນສະພາບການກິນຢູ່ ພັກເຊົາ ຫຍຸ້ງຍາກນັ້ນ ໃຫ້ຜູ້ໃຊ້ແຮງງານເພີ່ມ ຄ່າແຮງງານຂັ້ນຕ່ຳສຸດໃຫ້ຜູ້ອອກແຮງງານຜູ້ນັ້ນບໍ່ໃຫ້ຕ່ຳກ່ວາ 15% ຂອງຄ່າແຮງງານຂັ້ນຕ່ຳສຸດທີ່ກຳນົດໄວ້ໃນ ຂໍ້ 4.1 ຂອງແຈ້ງການແນະນຳສະບັບນີ້.

4.7. ຜູ້ໃຊ້ແຮງງານ ຕ້ອງພິຈາລະນາ ຂຶ້ນເງິນເດືອນ ຫຼື ຄ່າແຮງງານ ໃຫ້ຜູ້ອອກແຮງງານທີ່ມີຄວາມສາມາດ, ມີຄວາມບຸກບືນ, ມີຄວາມສຳເລັດໃນໜ້າທີ່ວຽກງານ ແລະ ມີອາຍຸການເຮັດວຽກຫຼາຍປີ ແຕ່ລະໄລຍະຢ່າງເຫມາະສົມ. ນອກຈາກເງິນເດືອນ ຫຼື ຄ່າແຮງງານແລ້ວ, ຜູ້ໃຊ້ແຮງງານຄວນພິຈາລະນາໃຫ້ບຳເນັດ, ລາງວັນ ແລະ ຜົນປະໂຫຍດອື່ນໆ ແກ່ຜູ້ອອກແຮງງານ ທີ່ມີຜົນງານດີເດັ່ນອີກດ້ວຍ.

## V. ການຈັດຕັ້ງປະຕິບັດ

5.1. ບັນດາຫົວໜ່ວຍແຮງງານຕ່າງໆ ທີ່ເຄື່ອນໄຫວໃນຂົງເຂດການຜະລິດ,ທຸລະກິດ ແລະ ການບໍລິການ ຂອງທຸກພາກສ່ວນເສດຖະກິດ ໃນຂອບເຂດທົ່ວປະເທດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມ ເນື້ອໃນຈິດໃຈຂອງແຈ້ງການແນະນຳສະບັບນີ້ຢ່າງເຂັ້ມງວດ.

5.2. ກົມຄຸ້ມຄອງແຮງງານ, ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ,ນະຄອນຫຼວງ ແລະ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ມີໜ້າທີ່ສົມທົບກັບພາກສ່ວນກ່ຽວຂ້ອງ ເຜີຍແຜ່,ແນະນຳ, ຊຸກຍູ້ ແລະ ກວດກາ ການຈັດຕັ້ງປະຕິບັດແຈ້ງການແນະນຳສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

5.3. ຄ່າແຮງງານຂັ້ນຕ່ຳສຸດນີ້ ມີຜົນບັງຄັບໃຊ້ ຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ.

5.6. ແຈ້ງການແນະນຳສະບັບນີ້ ປ່ຽນແທນແຈ້ງການສະບັບເລກທີ 1450/ ຮສສ, ລົງວັນທີ 30 / 4/ 2009 ແລະ ມີຜົນບັງຄັບໃຊ້ໄດ້ຢ່າງເປັນທາງການ ນັບແຕ່ວັນທີ 01 ເດືອນ ມັງກອນ 2012 ເປັນຕົ້ນໄປ ຈົນກ່ວາຈະມີການປ່ຽນແປງໃໝ່.

ລັດຖະມົນຕີວ່າການ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ອອນຈັນ ທຳມະວົງ